ບົດລາຍງານສົນທະນາສີຂຽວ Thematic Green Talk EP 2:

# ກະສິກຳອິນຊີ ແລະ ການຂຶ້ນທະບຽນກະສິກຳອິນຊີ

Organic Farming and Certification




**ຈຸດປະສົງ:**

ເພື່ອແລກປ່ຽນປະສົບການ ແລະ ເຜີຍແຜ່ຂໍ້ມູນໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈ ກ່ຽວກັບການບໍລິຫານຈັດການສວນຜະລິດແບບອິນຊີ ແລະ ຂັ້ນຕອນຕ່າງໆໃນຂະບວນການຂຶ້ນທະບຽນເປັນອິນຊີ.

**ເວລາ:** ວັນສຸກ ທີ 11 ກຸມພາ 2022, 9:00 – 11:00 ໂມງເຊົ້າ (ປະເທດລາວ), **ພາສາທີ່ໃຊ້**: ພາສາລາວ

**ຮູບແບບກອງປະຊຸມ**: ອອນລາຍຜ່ານໂປຣແກມຊູມ Zoom https://bit.ly/3ucZkgF

**ຜູ້ເຂົ້າຮ່ວມ**: ທັງໝົດ 37 ທ່ານ ທີ່ເປັນສະມາຊິກເຄືອຂ່າຍອາລີເຊຍ ແລະ ບໍ່ເປັນສະມາຊິກ.

| ລດ | ຊື່ | ອົງກອນ | ຫົວຂໍ້ | ດາວໂຫຼດບົດນຳສະເໜີ ແລະ ເອກະສານກົດລິ້ງຂ້າງລຸ່ມນີ້ |
|---|---|---|---|---|
| **1** | ທ່ານ ນາງ ຄຳມອນ ຫຼວງລາດ | ສະຫະກອນ ກະສິກຳອິນຊີທົ່ງມັ່ງ | ແລກປ່ຽນ: ການບໍລິຫານຈັດການສວນ ແລະກຸ່ມຜູ້ຜະລິດແບບອິນຊີ ແລະ ການຂຶ້ນທະບຽນອິນຊີຂອງສະຫະກອນ. | ແລກປ່ຽນ: ການບໍລິຫານຈັດການສວນ ແລະ ກຸ່ມຜູ້ຜະລິດແບບອິນຊີ ແລະ ການຂຶ້ນທະບຽນອິນຊີຂອງສະຫະກອນ. |

| | | | | |
|---|---|---|---|---|
| **2** | ທ່ານ ນາງ ສິດສຸດາ ອຸດົມສຸກ | ຫ້ອງການກະສິກຳ ເມືອງແປກ, ສະມາຄົມ ພັດທະນາກະສິກຳ ແລະ ສິ່ງແວດລ້ອມ ແບບຍືນຍົງ | ແລກປ່ຽນ: ປະສົບການໃນການເຮັດ ສົ່ງເສີມ ກະສິກ□ອິນຊີກັບຊາວ ກະສິກອນເຂດພາກເໜືອຂອງລາວ. | ການສົ່ງເສີມວຽກງານກະສິກຳອິນຊີ ໃຫ້ແກ່ຊາວກະສິກອນເຂດພາກເໜືອຂອງລາວ |
| **3** | ທ່ານ ນາງ ມິນທິດາ ສີສົມພູ | ພະແນກ ມາດຕະຖານ ແລະ ການຢັ້ງຢືນ, ກົມ ປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້ | ນຳສະເໜີ: ຂະບວນການຂຶ້ນທະບຽນ ອິນຊີ, ເງື່ອນໄຂ ແລະ ຄ່າໃຊ້ຈ່າຍ. | • ຂະບວນການຂຶ້ນ ທະບຽນກະສິກຳອິນຊີ, ມາດຕະຖານ ເງື່ອນໄຂ ຕ່າງໆ ແລະ ຄ່າໃຊ້ຈ່າຍ<br>• ແຈ້ງການການເກັບຄ່າ ທຳນຽມ ແລະ ຄ່າ ບໍລິການວິຊາການຂອງ ການກວດກາ ແລະ ການ ຢັ້ງຢືນຕາມມາດຕະຖານ ກະສິກຳອິນຊີ ແລະ ກະສິກຳທີ່ດີ<br>• ຂະບວນການອອກ ໃບຢັ້ງຢືນ<br>• ຄູ່ມືຂັ້ນຕອນການ ປະຕິບັດງານຂອງໜ່ວຍ ງານຢັ້ງຢືນກະສິກຳ ສະອາດ (ສະບັບປັບປຸງ ຄັ້ງທີ1) |

**ລາຍລະອຽດ:**

1. **ທ່ານ ນາງ ຄຳມອນ ຫຼວງລາດ, ປະທານສະຫະກອນກະສິກຳອິນຊີທົ່ງມັ່ງ, ສະມາຊິກເຄືອຂ່າຍຊາວກະສິກອນລາວ.**

- ແນະນຳກ່ຽວກັບສວນກະສິກຳອິນຊີທົ່ງມັ່ງ, ຕັ້ງຢູ່ເສັ້ນທາງເລກທີ 10 ທາງໄປບ້ານເກີນ, ຫ່າງຈາກຕົວເມືອງໄຊທານີ 30 ກິໂລແມັດ, ກຸ່ມເລີ່ມສ້າງຕັ້ງປີ 2016, ມີສະມາຊິກ 12 ຄອບຄົວ, ເນື້ອທີ່ 1.5 ເຮັກຕາ, ມີເຮືອນຮົ່ມ 15 ຫຼັງໃນເບື້ອງຕົ້ນ. ປັດຈຸບັນສະຫະກອນກະສິກຳອິນຊີທົ່ງມັ່ງມີເນື້ອທີ່ຂຶ້ນທະບຽນເປັນອິນຊີແລ້ວ 31 ເຮັກຕາ, 46 ຄອບຄົວ ແລະ ສາມາດເຂົ້າຕະຫຼາດອິນຊີໄດ້. ໃບຢັ້ງຢືນຂອງສະຫະກອນ ແມ່ນມີອາຍຸ 2 ປີ.
- ການຈັດການສວນອິນຊີ ແມ່ນຊາວສວນໄດ້ຮັບການຝຶກອົບຮົມ ຮຽນຮູ້ມາດຕະຖານ ແລະ ການຈັດການສວນຈາກຂະແໜງປູກຝັງ ແລະ ຊາວສວນໄດ້ເຮັດການປັບປ່ຽນ ປັບປຸງດິນ ເປັນເວລາ 12 ເດືອນ ຈຶ່ງສາມາດອອກຢັ້ງຢືນອິນຊີໄດ້.

ການນຳກວດກາຜັກຈາກສວນຫາຕະຫຼາດແມ່ນ ICS ຈະເປັນຄົນປະເມີນຜົນຜະລິດ ແລະ ຂຽນບົນນ□າ ຈຳນວນນຳສົ່ງຜັກທີ່ອອກຈາກສວນເຂົ້າຂາຍໃນຕະຫຼາດທຸກຄັ້ງ ເພື່ອເປັນການຕິດຕາມ ແລະ ສ້າງຄວາມເຊື່ອໝັ້ນໃຫ້ຜູ້ບໍລິໂພກວ່າບໍ່ມີການລັກລອບຂາຍຜັກອື່ນໃນຕະຫຼາດອິນຊີ.

- **ແລກປ່ຽນກ່ຽວກັບ ຂະບວນການອອກໃບຢັ້ງຢືນອິນຊີຂອງສະຫະກອນ ແມ່ນ**

1. ຊາວກະສິກອນຈະໄດ້ເຮັດປຶ້ມປະຫວັດສວນຂອງສະມາຊິກແຕ່ລະຄົນ, ມີແຜນວາດຂອງສວນເຊັ່ນ: ຈຳນວນເຮືອນຮົ່ມ, ຈຳນວນແປງຜັກປູກ.

2. ປື້ມຕິດຕາມສວນ: ເລີ່ມແຕ່ການລົງມືປູກ, ຝຸ່ນ ຊື້ຈາກໃສ, ແກບຈາກໂຮງສີໃດ, ສະໝຸນໄພຈາກໃສ, ແນວພັນຈາກໃສ ຕ້ອງໄດ້ບັນທຶກລາຍລະອຽດ ການໃສ່ຝຸ່ນປະລິມານເທົ່າໃດ, ແນວພັນຕໍ່ຕາແມັດເທົ່າໃດກຣາມ... ຕ້ອງໄດ້ຕິດຕາມທຸກເດືອນ ໄລຍະເວລາການໃສ່ຝຸ່ນ, ສີດນ້ຳໝັກ, ຈັກວັນເກັບກ່ຽວ, ເກັບກ່ຽວໄດ້ຈັກກິໂລຕໍ່ໝານ, ຂາຍລາຄາເທົ່າໃດໃນເດືອນນັ້ນເທົ່າໃດຕໍ່ກິໂລກຣາມ.

3. ຂະແໜງປູກຝັງຈະມີການຈັດຝຶກອົບຮົມ ICS (ການກວດກາພາຍໃນ ແມ່ນ ຊາວສວນທີ່ເປັນຕົວແທນເຂົ້າຮ່ວມການຝຶກອົບຮົມການຕິດຕາມ, ກວດກາການຜະລິດ. ທົ່ງມັ່ງປັດຈຸບັນມີ 8 ທ່ານ) ເພື່ອຕິດຕາມແຕ່ລະສວນ, ທຸກໆເດືອນຈະນຳເອົາຜັກໄປສຸ່ມກວດຫາສານຕົກຄ້າງໃນດິນ, ຫຼື ພືດຜັກ ໂດຍຫ້ອງການກະສິກຳເມືອງ.

ຢູ່ສວນທົ່ງມັງ ກວດ 6 ເດືອນເຄິ່ງ ບໍ່ມີສານຕົກຄ້າງ ທາງໜ່ວຍງານກ່ຽວຂ້ອງຈຶ່ງຮັບຮອງໃຫ້ ເພື່ອສາມາດເຂົ້າໄປໃນຕະຫຼາດອິນຊີໄດ້, ການກວດແມ່ນຈະກວດທຸກເດືອນຈົນກວ່າ 12 ເດືອນ ຈຶ່ງຂຽນໃບສະເໜີຫາກະສິກຳເມືອງ ເພື່ອລົງມາຕິດຕາມ ປະຫວັດສວນຂອງສະມາຊິກແຕ່ລະຄົນ. ທຸກສວນຕ້ອງໄດ້ປະກອບເອກະສານສະເໜີ ແລະ ສົ່ງໃຫ້ກະສິກຳເມືອງ ຫຼັງຈາກນັ້ນ ສົ່ງຕໍ່ຫາຂະແໜງປູກຝັງນະຄອນຫຼວງລົງກວດກາ ແລະ ສົ່ງຕໍ່ໃຫ້ພະແນກມາດຕະຖານ ແລະ ການຢັ້ງຢືນ ເພື່ອອອກໃບຢືນອິນຊີໃຫ້ສວນ ຫຼື ກຸ່ມ.

4.ການຂຽນປຶ້ມຕິດຕາມສວນ ແມ່ນມີຜົນດີ ໄດ້ເຮັດໃຫ້ຊາວສວນສາມາດຮູ້ໄດ້ວ່າໄລຍະການລະບາດຂອງພະຍາດໃນສວນຕົນ, ຊ່ວງເວລາລາຄາຜັກສູງ ຫຼື ຕ່ຳໃນເດືອນໃດ, ຜົນຜະລິດຫຼາຍ ຫຼື ໜ້ອຍໃນເດືອນໃດ. ສາມາດຮັບຮູ້ຄ່າຫູ້ຍຫ້ຽນ ສິ້ນເປືອງ ຕົ້ນທຶນຂອງການຜະລິດ ແລະ ລາຍຮັບ.

- **ຜົນປະໂຫຍດຂອງການມີໃບຢັ້ງຢືນ.**

- ຜົນປະໂຫຍດ ເຮັດໃຫ້ຜູ້ບໍລິໂພກສົນໃຈ ແລະ ໄດ້ຮັບລາຄາສູງກວ່າຜັກເຄມີ, ໃບຢັ້ງຢືນຊ່ວຍຢືນຢັນວ່າເປັນອິນຊີແທ້, ສ້າງຄວາມໝັ້ນໃຈໃຫ້ຜູ້ບໍລິໂພກ ແລະ ດີຕໍ່ສຸຂະພາບ, ພາຍຫຼັງທີ່ໄດ້ໃບຢັ້ງຢືນອິນຊີແລ້ວແມ່ນເຮົາຈະສາມາດນຳສະເໜີຂໍກາໝາຍສິນຄ້າເປັນຂອງສວນເອງໄດ້.
- ທາງດ້ານລາຍຮັບ ໄລຍະກ່ອນໂຄວິດຊາວກະສິກອນສາມາດມີລາຍຮັບສະເລ່ຍ 4-5 ລ້ານກີບ ຕໍ່ເດືອນ. ຊ່ວງໂຄວິດເດືອນ 7-10 ສ້າງຜົນກະທົບຫຼາຍໃຫ້ແກ່ຊາວສວນ ເພາະບໍ່ສາມາດໄປຂາຍຜັກໄດ້ ແລະ ເຂດທົ່ງມັ່ງເປັນບ້ານແດງ ແລະ ຕະຫຼາດກໍ່ເປັນບ້ານແດງ ເຮັດໃຫ້ບໍ່ສາມາດສົ່ງຂາຍສິນຄ້າໄດ້ ເຮັດໃຫ້ລາຍຮັບ 1.5 ລ້ານກີບຕໍ່ເດືອນ.
- ຕະຫຼາດຂອງຊາວກະສິກອນທົ່ງມັ່ງ ແມ່ນສາມາດຊື້ໄດ້ທີ່:

1. ສູນການຄ້າວຽງຈັນເຊັນເຕີ ທຸກວັນອາທິດ, ວັນພຸດ ແລະ ວັນສຸກ.
2. ຕະຫຼາດອິນຊີຢູ່ສີຫອມ ວັນພະຫັດ ແລະ ວັນຈັນ.
3. ສົ່ງບໍລິສັດ ຊີພີ 3 ມື້ຕໍ່ອາທິດ: ວັນຈັນ, ວັນພຸດ ແລະ ວັນສຸກ.
4. ຂາຍອອນລາຍ ທາງວອດແອັບ ແລະ ລາຍ.
5. ຕະຫຼາດແຄມທາງ ກຸດສາມບາດ.

▶ **ຂໍ້ສະເໜີ**

ໃນເບື້ອງຕົ້ນປີ 2017 ແມ່ນມີຂໍ້ຫຍຸ້ງຍາກຄື: 1. ການປະກອບເອກະສານ, 2. ຄ່າໃຊ້ຈ່າຍໃນການຂຶ້ນທະບຽນ ແມ່ນປະມານ 5 ລ້ານ ຕໍ່ກຸ່ມ ຕໍ່ປີ ແລະ ທາງກຸ່ມໄດ້ສະເໜີຕໍ່ກອງປະຊຸມ ມາໃນປີ2020 ແມ່ນຫຼຸດຄ່າໃຊ້ຈ່າຍເປັນ 3.480.000 ກີບ ແລະ ການປະກອບເອກະສານກໍ່ງ່າຍຂຶ້ນ. ແຕ່ຂໍ້ຫຍຸ້ງໃນການປະກອບເອກະສານ ເພາະຊາວສວນ ສ່ວນຫຼາຍແມ່ນບໍ່ໄດ້ໜັງສືເຮັດໃຫ້ປະກອບເອກະສານຍາກ. ການອອກໃບທະບຽນ ແມ່ນໃຊ້ເວລາຫຼາຍ ແລະ ການນຳໃຊ້ແມ່ນມີອາຍຸສັ້ນ.

- ເພື່ອເປັນການສົ່ງເສີມຜູ້ຜະລິດຂະໜາດນ້ອຍ ແມ່ນສະເໜີໃຫ້ຫຼຸດຄ່າໃຊ້ຈ່າຍໃນການຂໍໃບຢັ້ງ.
- ການປະກອບເອກະສານແມ່ນຢາກໃຫ້ພາກສ່ວນກ່ຽວຂ້ອງເຊັ່ນ ກະສິກຳເມືອງ...ມານຳພາໃນການປະກອບ ແລະ ຕິດຕໍ່ກັບຊາວສວນເປັນປະຈຳ.
- ເອກະສານໄປຫາກົມມາດຕະຖານແມ່ນໃຫ້ເອົາວັນທີທີ່ພະແນກມາດຕະຖານ ແລະ ການຢັ້ງຢືນອະນຸມັດເພື່ອບໍ່ໃຫ້ເກີດການສັບສົນໃຫ້ແກ່ຊາວສວນ.

**<u>2. ທ່ານ ນາງ ມົນທິດາ ສີສົມພູ, ວິຊາການພະແນກມາດຕະຖານ ແລະ ການຢັ້ງຢືນ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້</u>**

- ກົມປູກຝັງມີ 7 ພະແນກ, 2 ສູນ.
- ທິດທາງຂອງກົມແມ່ນ ກະສິກຳສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ.
- ກະສິກຳສະອາດ ມີ 4 ຢ່າງ: ກະສິກຳທີ່ດີ (ສາມາດນຳໃຊ້ສານເຄມີ ແລະ ຢູ່ໃນຫຼັກການ), ກະສິກ□າບໍ່ນ□າໃຊ້ຢາປາບສັກຕູພືດ (ບໍ່ອະນຸຍາດໃຫ້ນຳໃຊ້ຢາຂ້າແມງໄມ້), ກະສິກຳອິນຊີ (ຫ້າມນຳໃຊ້ສານເຄມີ), ແລະ ກະສິກຳທຳມະຊາດ (ບໍ່ນຳໃຊ້ສານເຄມີ, ນຳໃຊ້ຝຸ່ນບົ່ມຝຸ່ນຄອກ).
- ມາດຕະຖານ ແລະ ລະບົບການຢັ້ງຢືນ ປັດຈຸບັນແມ່ນມີແຕ່ ກະສິກຳອິນຊີ ແລະ ກະສິກຳທີ່ດີ. ສ່ວນອີກ 2 ຢ່າງແມ່ນຍັງບໍ່ມີການຢັ້ງຢືນ.
- ລະບົບການຜະລິດກະສິກຳອິນຊີໄດ້ກວມເອົາ 4 ປັດສະຍາ: ດ້ານສຸຂະພາບຄົນ ແລະ ສັດ, ດ້ານຄວາມເປັນທຳສິ່ງແວດລ້ອມ ແລະ ການດຳລົງຊີວິດ, ດ້ານນິເວດ ການອານຸລັກຊີວະນາໆພັນ, ຄວາມຫ່ວງໄຍ ຍຸກປັດຈຸບັນ ແລະ ຄົນລຸ້ນຫຼັງ.
- ການຜະລິດກະສິກຳອິນຊີ ແມ່ນ ການໝູນວຽນຂອງທາດອາຫານໃນຟາມ, ການເພີ່ມທາດອາຫານໃຫ້ພືດ, ມີຄວາມຫຼາກຫຼາຍ ປູກປະສົມປະສານ, ການອະນຸລັກ ແລະ ຟື້ນຟູນິເວດ, ການອາໄສກົນໄກທຳມະຊາດ ເລືອກແນວພັນໃຫ້ເໝາະສົມ. ການເພິ່ງພາປັດໃຈການຜະລິດໃຫ້ນຳໃຊ້ພາຍໃນຟາມໃຫ້ຫຼາຍທີ່ສຸດ.
- ມາດຕະຖານກະສິກຳອິນຊີລາວ ແມ່ນປັດຈຸບັນປີ 2022 ຈະໄດ້ໃຊ້ມາດຕະຖານສະບັບປັບປຸງທຽບເທົ່າອາຊຽນ. ແຕ່ປີ 2021 ຄືນຫຼັງແມ່ນຈະໃຊ້ມາດຕະຖານຫົວເກົ່າຂອງປີ 2005.

- ມາດຕະຖານອິນຊີ ຈະເບິ່ງເລື່ອງລະບົບນິເວດໃນຟາມ, ໄລຍະການປັບປ່ຽນ ຫຼື ຂ້າມຜ່ານ, ຊະນິດ ແລະ ແນວພັນ (ສົ່ງເສີມໃຫ້ໃຊ້ແນວພັນຕົນເອງ, ແລະ ຖ້າບໍ່ສາມາດເກັບແນວພັນໄດ້ເອງແມ່ນຕ້ອງມີວິທີການກໍາຈັດສານປົນເປື້ອນໃນແນວພັນ ເພື່ອຄວາມປອດໄພຈາກສານຕົກຄ້າງ), ຄວາມຫຼາກຫຼາຍຂອງພືດພາຍໃນຟາມ, ການປ້ອງກັນ ແລະ ກໍາຈັດສັດຕູພືດ ແບບປະສົມປະສານ ແລະ ນໍາໃຊ້ສະໝຸນໄພ, ການປ້ອງກັນການປົນເປື້ອນທາງອາກາດ ແລະ ທາງນໍ້າ (ຕ້ອງເບິ່ງສະພາບຄວາມສ່ຽງ ເພື່ອປ້ອງກັນການປົນເປື້ອນ), ການປຸງແຕ່ງ ແບບວິທີທ□າມະຊາດ, ການຫຸ້ມຫໍ່ ແມ່ນໃຫ້ຮັກສາສິ່ງແວດລ້ອມ, ຜູ້ຮັບຈ້າງການຜະລິດ ກໍ່ຕ້ອງໄດ້ຮັບການກວດກາ ແລະ ປະຕິບັດມາດຕະຖານກະສິກໍາອິນຊີເຊັ່ນກັນ, ການໃຊ້ກາໝາຍ ແລະ ໃຊ້ສະຫຼາກ ແມ່ນຕ້ອງ 95 ເປີເຊັນ ແລະ ຖ້າການຜະລິດໃນໄລຍະປັບປ່ຽນແມ່ນບໍ່ສາມາດໃຊ້ກາໝາຍກະສິກໍາອິນຊີໄດ້.
- ຂະບວນການອອກໃບຢັ້ງຢືນ:

  - ການສະໝັກ ແມ່ນສາມາດຍື່ນໄດ້ຢູ່ຂະແໜງປູກຝັງ ຢູ່ຫ້ອງການກະສິກ□າເມືອງ ແລະ ສິ່ງຕໍ່ຫາກົມປູກຝັງ, ພະແນກມາດຕະຖານ ແລະ ການຢັ້ງຢືນ ແມ່ນຈະກວດກາຄວາມຄົບຖ້ວນຂອງເອກະສານທີ່ຍື່ນເຂົ້າມາ.

  - ການກວດກາ ແມ່ນຈະມີການ ຊໍາລະຄ່າໃຊ້ຈ່າຍກ່ອນການລົງກວດກາ ຈະບໍ່ຮັບການຊໍາລະຢູ່ພາກສະໜາມ.

  - ການຢັ້ງຢືນ: ແມ່ນນັກກວດກາ ແມ່ນຈະເຮັດບົດລາຍງານ ແລະ ຈັດກອງປະຊຸມຜ່ານຄະນະ ກໍາມະການກ່ອນ ແລະ ຕັດສິນຜົນ, ຫຼັງຈາກນັ້ນແຈ້ງຜົນໃຫ້ຜູ້ສະເໜີ ເຊິ່ງມີ 3 ແບບ: ຜ່ານແບບມີເງື່ອນໄຂ (ຜ່ານ ແຕ່ໃຫ້ມີການປັບປຸງບາງຢ່າງ, ຜ່ານແບບບໍ່ມີເງື່ອນໄຂ ແມ່ນສາມາດອອກໃບຢັ້ງຢືນໄດ້ເລີຍ ແລະ ບໍ່ຜ່ານ.

  - ການຕໍ່ອາຍຸການຢັ້ງຢືນ ແມ່ນເຮັດໃບສະເໜີ ແລະ ແຜນການຜະລິດ ໂດຍ ຍື່ນຜ່ານຂະບວນການຮູບແບບເກົ່າ ແລະ ຍື່ນກ່ອນ 60 ວັນ ກ່ອນໝົດອາຍຸ. ໃບຢັ້ງຢືນ ແມ່ນມີອາຍຸ 2 ປີ ແລະ ອາຍຸໃບຢັ້ງຢືນແມ່ນແຕ່ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຈະມີການລົງກວດກາທຸກປີ.

  - ເອກະສານທີ່ຕ້ອງກະກຽມ ເບິ່ງລາຍການແບບຟອມລະອຽດໄດ້ທີ່ ຄູ່ມືຂັ້ນຕອນການປະຕິບັດງານຂອງໜ່ວຍງານຢັ້ງຢືນກະສິກໍາສະອາດ (ສະບັບປັບປຸງຄັ້ງທີ1)
- ຄ່າໃຊ້ຈ່າຍ ມີ ຄ່າທໍານຽມ (ໃບຢັ້ງຢືນມາດຕະຖານກະສິກໍາອິນຊີ ແລະ ມາດຕະຖານກະສິກໍາທີ່ດີ 50,000 ກີບ ຕໍ່ໃບ, ໃບຢັ້ງຢືນຂໍຕໍ່ອາຍຸ 50,000 ກີບ ຕໍ່ໃບ, ໃບຢັ້ງຢືນຝຸ່ນອິນຊີ 50,000 ກີບຕໍ່ໃບ) ແລະ ຄ່າບໍລິການ (ສັງລວມ, ຄົ້ນຄວ້າ ແລະ ປະເມີນຜົນ ແລະ ກະກຽມເອກະສານເພື່ອລົງກວດກາພື້ນທີ່ 250,000 ກີບຕໍ່ຄັ້ງ; ສັງລວມ,ຄົ້ນຄວ້າ ແລະ ປະເມີນ ແລະ ຂຽນບົດລາຍງານສະເໜີຕໍ່ຄະນະກໍາມະການພິຈາລະນາອອກໃບຢັ້ງຢືນ 250,000 ກີບຕໍ່ຄັ້ງ; ວິຊາການລົງກວດກາພື້ນທີ່ການຜະລິດ 250,000 ກີບຕໍ່ ຄົນຕໍ່ວັນ) ແລະ ຄ່າໃຊ້ຈ່າຍໃນການເດີນທາງ,ອັດຕາກິນ ແລະ ຄ່າທີ່ພັກ ແມ່ນບໍ່ລວມໃນຄ່າບໍລິການ ຈະຄິດໄລ່ຕາມຕົວຈິງໃນມື້ລົງເຮັດວຽກ. ເອກະສານເພີ່ມ ແຈ້ງການການເກັບຄ່າທໍານຽມ ແລະ ຄ່າບໍລິການວິຊາການຂອງການກວດກາ ແລະ ການຢັ້ງຢືນຕາມມາດຕະຖານກະສິກໍາອິນຊີ ແລະ ກະສິກໍາທີ່ດີ
- ຜົນປະໂຫຍດຂອງການອອກໃບຢັ້ງຢືນກະສິກໍາອິນຊີ ແມ່ນ ດ້ານຜູ້ຜະລິດ ສາມາດເຂົ້າເຖິງຕະຫຼາດກະສິກ□າອິນຊີ, ຜູ້ບໍລິໂພກ ແລະ ຜູ້ຜະລິດກໍ່ຈະມີຄວາມປອດໄພ ຕໍ່ສຸຂະພາບ. ພາກລັດມີນະໂຍບາຍໃນການສົ່ງເສີມກະສິກໍາອິນຊີ, ມີມາດຕະຖານ, ລະບົບການຢັ້ງຢືນ, ມີບັນດາໂຄງການໃນການສົ່ງເສີມໃຫ້ເຮັດການຜະລິດກະສິກໍາອິນຊີ ເຊັ່ນ: ໃຫ້ຄວາມຮູ້ທາງເຕັກນິກການຜະລິດ, ການເຂົ້າເຖິງແຫຼ່ງທຶນ...
- ຂະບວນການຮັບສະມັກ ແມ່ນແຂວງຈະເປັນຜູ້ກວດເອກະສານກ່ອນຈະຂຶ້ນມາຫາກົມ.

- ແຜນການຂອງລັດ ໃນປີ 2022 ແມ່ນມີສ້າງນັກກວດກາຂັ້ນແຂວງ ໃນທົ່ວປະເທດໃຫ້ໄດ້ 20 ຄົນ. ປີ 2023 ຈະສ້າງໜ່ວຍງານກວດກາຢູ່ 3 ພາກ (ພາກເໜືອ, ພາກກາງ ແລະ ພາກໃຕ້) ຈົນເຖິງປີ 2025 ແມ່ນຈະໃຫ້ສາມາດເປັນໜ່ວຍງານຢັ້ງຢືນໃຫ້ໄດ້.

**<u>3. ທ່ານ ນາງ ສິດສຸດາ ອຸດົມສຸກ, ຜູ້ປະສານງານຂັ້ນເມືອງສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ, ຫ້ອງການກະສິກຳປ່າໄມ້ເມືອງແປກ, ແຂວງຊຽງຂວາງ</u>**

- ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງແມ່ນໄດ້ຈັດຕັ້ງປະຕິບັດກະສິກຳຮ່ວມກັບພະແນກກະສິກຳ ແລະ ປ່າໄມ້ແຂວງ ນັບແຕ່ປີ 2009.
- ໄດ້ຈັດຕັ້ງປະຕິບັດໂຄງການພັດທະນາກະສິກຳຍືນຍົງ ແລະ ການຕະຫຼາດ SAMADP, ໂຄງການກະສິກ□າອິນຊີເປັນສິນຄ້າ COFI (ເປົ້າໝາຍແຂວງຊຽງຂວາງ ມີ 5 ເມືອງ: ເມືອງແປກ, ເມືອງຄຳ, ເມືອງຄູນ, ເມືອງຜາໄຊ ແລະ ເມືອງພູກູດ), ແຂວງວຽງຈັນ ມີ 1 ເມືອງ ເມືອງວັງວຽງ)
- ກິດຈະກຳຂອງໂຄງການ:
    - ໄດ້ສົ່ງເສີມວຽກງານກະສິກຳອິນຊີ ຫຼັກໆແມ່ນການປູກຜັກອິນຊີ, ໄດ້ສ້າງຕະຫຼາດກະສິກຳອິນຊີ 2 ແຫ່ງ: ຕະຫຼາດສີບຸນເຮືອງ ແລະ ຕະຫຼາດໂພນສະຫວັນ.
    - ຂະບວນການສົ່ງເສີມ ປູກຜັກອິນຊີ ແມ່ນໄດ້ສ້າງຕັ້ງກຸ່ມຂັ້ນບ້ານ, ຄັດເລືອກສະມາຊິກກຸ່ມ, ແລະທັດສະນະສຶກສາ, ຝຶກອົບຮົມເຕັກນິກຜະລິດໃຫ້ສະມາຊິກນັບແຕ່ໄລຍະປັບປ່ຽນ ຈົນເຖິງການໄດ້ຮັບໃບຢັ້ງຢືນ.
    - ກິດຈະກຳເສີມ ການປູກເຂົ້າແບບຍືນຍົງ SRS ເຝິກອົບຮົມທິດສະດີ ແລະ ຈັດຕັ້ງປະຕິບັດການຄັດເມັດພັນ, ຕົກກ້າ ແລະ ປັກດຳ.
    - ວຽກງານການຕະຫຼາດ ແມ່ນໄດ້ເລີ່ມເປີດຕະຫຼາດກະສິກຳອິນຊີ ປີ 2009.
    - ການທ້ອນເງິນ ສ້າງກອງທຶນສະມາຊິກ.
    - ການພັດທະນາພັນພືດ ເຝິກເຕັກນິກການເກັບຮັກສາ ແນວພັນພືດ.
    - ການລ້ຽງສັດ ເພື່ອໄດ້ມູນສັດມາເຮັດເປັນຝຸ່ນບົ່ມ.
    - ລົນນະລົງການຫຼຸດຜ່ອນການນຳໃຊ້ສານເຄມີ ແລະ ການກວດສອບສານເຄມີຕົກຄ້າງໃນສວນຂອງສະມາ ຊິກ ທຸກ 6 ເດືອນ, 2 ຄັ້ງຕໍ່ປີ.
    - ສ້າງຊາວກະສິກອນກາຍເປັນຄູເຝິກ ແລະ ສ້າງຕັ້ງກຸ່ມຂັ້ນບ້ານ, ສ້າງສະຫະກອນ, ສ້າງສະມາຄົມຊາວກະສິກອນ.
- ລະບົບການຢັ້ງຢືນອິນຊີ ແມ່ນມີ 2 ລະບົບຄື: ລະບົບການຢັ້ງຢືນແບບມີສ່ວນຮ່ວມ PGS ແລະ ລະບົບການຢັ້ງຢືນພາຍໃນ ICS. ລະບົບທີ່ທາງໂຄງການໄດ້ນຳໃຊ້ແມ່ນ **ລະບົບການຢັ້ງຢືນແບບມີສ່ວນຮ່ວມ** ເຊິ່ງເໝາະສົມໃນການຜະລິດຂະໜາດນ້ອຍເພື່ອຂາຍພາຍໃນແຂວງ ແລະ ປະເທດ ເພາະຍັງບໍ່ມີການສົ່ງອອກຕ່າງປະເທດ ການຢັ້ງຢືນແບບນີ້ ແມ່ນຊ່ວຍໃນການຫຼຸດຜ່ອນຕົ້ນທຶນ ຄ່າໃຊ້ຈ່າຍໃນການຂໍໃບຢັ້ງຢືນ.
- ສິ່ງສຳຄັນໃນວຽກງານການສົ່ງເສີມແມ່ນ ວິຊາການຕ້ອງມີຄວາມຮູ້-ເຕັກນິກ, ການສົ່ງເສີມການປູກຜັກຕ້ອງມີຕະຫຼາດຮອງຮັບ ເພື່ອຈະຊ່ວຍໃນການວາງແຜນການປູກ, ຕ້ອງມີການເຊື່ອມຕໍ່ຕະຫຼາດຫາຜູ້ປະກອບການ.

ບັນທຶກກອງປະຊຸມໂດຍ: ນ. ຈິນຕະນາພອນ ແກ້ວວິຈິດ